

# ບົດທີ 14
# ການກຽມພ້ອມກ່ອນເຂົ້າສູນລ້ຽງເດັກ ແລະ ໂຮງຮຽນ

ບາງຊຸມຊົນມີບ່ອນດູແລເດັກໃນໄລຍະເວລາພໍ່ແມ່ໄປເຮັດວຽກ. ໂດຍທົ່ວໄປແລ້ວ ພວກເຂົາເອີ້ນບ່ອນນີ້ວ່າ ໂຮງຮຽນກິນນອນ, ບ່ອນລ້ຽງເດັກເວລາກາງເວັນ, ສູນຝາກເດັກ, ບ່ອນຝາກເດັກ ຫຼື ບ່ອນຮັບລ້ຽງເດັກ. ເດັກຕາບອດ ຫຼື ເດັກເຫັນບໍ່ແຈ້ງ ສາມາດໄປສູນລ້ຽງເດັກເໝືອນກັບເດັກທົ່ວໄປ. ເມື່ອລູກຂອງເຈົ້າຄົບອາຍຸເຂົ້າໂຮງຮຽນ, ພວກເຂົາຄວນໄດ້ເຂົ້າໂຮງຮຽນຄືກັນກັບເດັກໃນໄວດຽວກັນ. ເພື່ອເຮັດໃຫ້ເລື່ອງນີ້ປະສົບຜົນສຳເລັດ ແລະ ເປັນໄປດ້ວຍດີ, ເຈົ້າສາມາດ:

- ຊ່ວຍກະກຽມລູກຂອງເຈົ້າກ່ອນເຂົ້າສູນລ້ຽງເດັກ ຫຼື ໂຮງຮຽນ.
- ຊ່ວຍຄູສູນລ້ຽງເດັກ ຫຼື ໂຮງຮຽນໃນການກະກຽມລູກຂອງເຈົ້າ.

## ຊ່ວຍກະກຽມລູກຂອງເຈົ້າກ່ອນເຂົ້າສູນລ້ຽງເດັກ ຫຼື ໂຮງຮຽນ

### ► ໃຫ້ເດັກຮຽນຫຼິ້ນເປັນກຸ່ມ

ຢູ່ທີ່ໂຮງຮຽນລູກຂອງເຈົ້າຈະໄດ້ຫຼິ້ນກັບໝູ່ຫຼາຍຄົນ. ກ່ອນໜ້າທີ່ລູກຂອງເຈົ້າຈະໄປໂຮງຮຽນ, ເຈົ້າຕ້ອງຊ່ວຍລູກກະກຽມກ່ອນ ໂດຍການກະຕຸ້ນໃຫ້ລາວຫຼິ້ນກັບເດັກຄົນອື່ນໆ ແລະ ຊ່ວຍໃຫ້ເດັກຄົນອື່ນມາຫຼິ້ນກັບລາວ.

**ຖ້າລູກເຈົ້າມີປະສົບການໃນການຫຼິ້ນກັບໝູ່ກ່ອນເຂົ້າໂຮງຮຽນ, ລາວກໍ່ຈະເຂົ້າກັບໝູ່ໃໝ່ຢູ່ໂຮງຮຽນໄດ້ງ່າຍກວ່າເກົ່າ**



## ► ໃຫ້ເດັກຮຽນຮູ້ສິ່ງຕ່າງໆຄືກັນກັບຢູ່ສູນລ້ຽງເດັກ.

ຖ້າລູກຂອງເຈົ້າບໍ່ຄ່ອຍໄດ້ໃຊ້ເວລາຢູ່ກັບເອື້ອຍອ້າຍ, ລາວອາດຈະບໍ່ເຂົ້າໃຈເຖິງສິ່ງທີ່ຈະເກີດຂຶ້ນໃນສູນລ້ຽງເດັກ ຫຼື ໂຮງຮຽນ ເພາະວ່າລາວບໍ່ໄດ້ຟັງເລື່ອງເຫດການທີ່ເກີດຂຶ້ນຢູ່ໂຮງຮຽນທີ່ເດັກຫຼາຍຄົນໄດ້ຮຽນຮູ້ມາກ່ອນ. ເດັກຕາບອດ ຫຼື ເດັກເຫັນບໍ່ແຈ້ງ ອາດຈະຢ້ານເມື່ອຫ່າງຈາກຄອບຄົວເປັນເວລາຫຼາຍຊົ່ວໂມງ. ສະນັ້ນ ເຈົ້າຕ້ອງຊ່ວຍໃຫ້ລາວເຂົ້າໃຈສະພາບຂອງສູນລ້ຽງເດັກ ຫຼື ໂຮງຮຽນນັ້ນເປັນແນວໃດ.

ເລົ່າເລື່ອງທີ່ຕື່ນເຕັ້ນຢູ່ສູນລ້ຽງເດັກ ຫຼື ໂຮງຮຽນຢູ່ໃຫ້ລາວຟັງ.




ບອກເອື້ອຍອ້າຍ ຫຼິ້ນນຳນ້ອງຄືກັນກັບຢູ່ໂຮງຮຽນ.




## ➢ ມາຮູ້ຈັກກັບ ສູນລ້ຽງເດັກ ຫລື ໂຮງຮຽນ

ຖ້າວ່າລູກຂອງເຈົ້າໄດ້ຢ້ຽມຢາມ ແລະ ຍ່າງເລາະເບິ່ງໂຮງຮຽນກ່ອນເຂົ້າໂຮງຮຽນ, ມື້ເຂົ້າໂຮງຮຽນທຳອິດ ລາວຈຶ່ງຮູ້ສຶກສະບາຍໃຈຂຶ້ນກວ່າເກົ່າ. ພະຍາຍາມໃຫ້ລາວໄດ້ພົບກັບຄູໃນຍາມບໍ່ມີໃຜເຂົ້າຮຽນ.



## ຊ່ວຍໂຮງຮຽນກຽມພ້ອມຮັບລູກເຈົ້າກ່ອນເຂົ້າຮຽນ.

### ► ຊ່ວຍໃຫ້ຄູເຂົ້າໃຈລູກເຈົ້າ.

ຄູທີ່ບໍ່ເຄີຍສອນເດັກຕາບອດ ຫຼື ເດັກເຫັນບໍ່ແຈ້ງອາດຈະບໍ່ໝັ້ນໃຈວ່າ ຈະສອນລູກຂອງເຈົ້າໄດ້ບໍ່. ເຈົ້າເອງນັ້ນຮູ້ຈັກລູກຂອງເຈົ້າໄດ້ດີກວ່າຄົນອື່ນ ແລະ ມີຫຼາຍຢ່າງທີ່ເຈົ້າສາມາດແລກປ່ຽນຄວາມຮູ້ກັບຄູ. ຄຳແນະນຳຈຳນວນໜຶ່ງດັ່ງຕໍ່ໄປນີ້ທີ່ເຈົ້າອາດຈະຕ້ອງໄດ້ເວົ້າກັບຄູຄື:

- ບອກຄູໃຫ້ຮູ້ຈັກຄວາມສາມາດ ແລະ ທັກສະຂອງລູກເຈົ້າ
- ສະແດງວິທີຊ່ວຍລູກເຈົ້າເຄື່ອນໄຫວໃນໂຮງຮຽນໃຫ້ຄູເບິ່ງ.
- ຖ້າວ່າລູກຂອງເຈົ້າສາມາດເຫັນໄດ້ໜ້ອຍໜຶ່ງ, ເຈົ້າຕ້ອງອະທິບາຍວ່າລູກເຈົ້າເຫັນຫຍັງໄດ້ແດ່ ແລະ ວິທີທີ່ເຮັດໃຫ້ລາວເບິ່ງເຫັນ.
- ເຕືອນສະຕິຄູກ່ຽວກັບເລື່ອງທີ່ລູກເຈົ້າບໍ່ສາມາດເບິ່ງເຫັນພາບການເຄື່ອນໄຫວ ຫຼື ການໃຊ້ໃບໜ້າສະແດງອາການ, ດັ່ງນັ້ນ ຄູສອນຄວນໃຊ້ສຽງ.
- ປຶກສາກ່ຽວກັບຄວາມທ້າທາຍ (ປະສົບການໃໝ່ໆ) ທີ່ລູກເຈົ້າມີ.
- ແລກປ່ຽນຂໍ້ມູນກ່ຽວກັບ ການຕາບອດ ແລະ ຕາບອດນັ້ນມີຜົນກະທົບແນວໃດຕໍ່ກັບພັດທະນາການຂອງເດັກ.




ພາກທີ່ສະມາຊິກໃນຊຸມຊົນຊ່ວຍເຫຼືອເດັກ ເຊິ່ງເລີ່ມແຕ່ໜ້າທີ 126 ຄູຈະໄດ້ພົບກັບຄຳແນະນຳທີ່ມີປະໂຫຍດຄືກັນ. ພິເສດກໍ່ແມ່ນໂຕເຈົ້າເອງ ທີ່ຈະເປັນຜູ້ແລກປ່ຽນຄວາມຄິດເຫັນ ແລະ ວິທີເພື່ອຊ່ວຍໃຫ້ຄູເຂົ້າໃຈເຖິງຄົນຕາບອດ ແລະ ລວມເຖິງເດັກຜູ້ທີ່ເບິ່ງບໍ່ເຫັນແຈ້ງດີໃນເກມເດັກຫຼິ້ນ.

## ► ການກະກຽມຫ້ອງຮຽນເພື່ອລູກຂອງເຈົ້າ

ເຈົ້າຕ້ອງໄດ້ລົມກັບຄູກ່ຽວກັບຫ້ອງຮຽນ, ພ້ອມດຽວກັນນັ້ນ ຊອກຫາວິທີເຮັດໃຫ້ຫ້ອງປອດໄພ ແລະ ສະດວກສະບາຍຍິ່ງຂຶ້ນ. ເຈົ້າອາດຈະຕ້ອງ:

- ອະທິບາຍວິທີເພື່ອບໍ່ໃຫ້ເດັກຕາບອດຕຳກັບສິ່ງຂອງ ແລະ ວິທີເປີດ ຫຼື ປິດປະຕູ .
- ສິ່ງສຳຄັນຄືອະທິບາຍໃຫ້ເຂົາເຈົ້າເກັບມ້ຽນສິ່ງຂອງໃຫ້ຖືກບ່ອນ ເພາະວ່າເມື່ອເວລາລູກເຈົ້າເຄື່ອນທີ່ ໄປໃສກໍ່ຈຶ່ງໝັ້ນໃຈ.
- ມັນຈະເປັນການດີ ຖ້າເຈົ້າຕັດສິນໃຈເລືອກບ່ອນນັ່ງທາງໜ້າທີ່ໃກ້ກັບຄູໃຫ້ລູກເຈົ້າ.




**ຖ້າຫາກວ່າ ເດັກສາມາດເຫັນຕົວອັກສອນ, ເມື່ອເວລາຄູຂຽນຕົວອັກສອນຢູ່ເທິງກະດານກໍ່ໃຫ້ເປັນຕົວໜາໃຫຍ່ ແລະ ພ້ອມດຽວກັນນັ້ນ ຄູກໍ່ຄວນໝັ່ນກວດເບິ່ງວ່າ ເຂົາເຈົ້າເຫັນບໍ່.**

## ການກະກຽມກ່ອນການຮຽນອ່ານ ແລະ ຂຽນ.

ຖ້າລູກເຈົ້າສາມາດເຫັນໄດ້ໜ້ອຍໜຶ່ງ, ກໍ່ໃຫ້ພະຍາຍາມຊອກຫາວິທີ ເພື່ອມັນອາດຈະຊ່ວຍໃຫ້ລູກເຈົ້າສາມາດເຫັນຕົວອັກສອນ. ຖ້າລູກເຈົ້າສາມາດເຫັນຕົວອັກສອນ, ລາວອາດຈະສາມາດອ່ານດ້ວຍການ:



**ໃສ່ແວ່ນຕາ**



**ໃຊ້ແວ່ນຂະຫຍາຍ (ແວ່ນທີ່ເຮັດໃຫ້ຕົວອັກສອນຕົວນ້ອຍ ກາຍເປັນຕົວອັກສອນຕົວໃຫຍ່)**




**ອ່ານປຶ້ມທີ່ມີຕົວອັກສອນໂຕໃຫຍ່ ເພື່ອເຮັດໃຫ້ພວກເຂົາເຫັນໄດ້ດີກວ່າເກົ່າ.**

ຖ້າລູກເຈົ້າມີບັນຫາໃນການອ່ານຢູ່ໂຮງຮຽນຕະຫຼອດ, ເຈົ້າສາມາດ:

- ຂໍຮ້ອງບາງຄົນອ່ານປຶ້ມ ແລະ ບົດຮຽນດ້ວຍສຽງດັງໃຫ້ລາວຟັງ.
- ຂໍຮ້ອງບາງຄົນອ່ານປຶ້ມຂອງລາວເຂົ້າເຄື່ອງອັດສຽງ, ດັ່ງນັ້ນ ລາວຈຶ່ງສາມາດຟັງໃນຄັ້ງຕໍ່ໄປໄດ້.
- ພິຈາລະນາເບິ່ງການສອນໜັງສືດ້ວຍຕົວອັກສອນນູນ (ຢູ່ໜ້າທີ 139). ຖ້າຫາກສາຍຕາຂອງລູກເຈົ້າບໍ່ດີ ນີ້ກໍ່ອາດຈະເປັນທາງເລືອກໜຶ່ງ.

## ການຮຽນອ່ານ ແລະ ຂຽນຕົວໜັງສືນູນ.

ຖ້າລູກເຈົ້າບໍ່ເຫັນຕົວໜັງສື ຫຼື ຕາບອດ, ຄູທີ່ໄດ້ຮັບການຝຶກເທັກນິກພິເສດ ແມ່ນສາມາດສອນລາວອ່ານ ແລະ ຂຽນດ້ວຍລະບົບຕົວອັກສອນນູນ. ຕົວອັກສອນນູນເບິ່ງຄືກັບວ່າມັນຊິຍາກ, ເພາະມັນເປັນວິທີໃໝ່ ແຕ່ວ່າມັນເປັນທົບທາງດຽວທີ່ສາມາດຊ່ວຍລາວໄດ້. ເດັກ ແລະ ຜູ້ໃຫຍ່ສ່ວນຫຼາຍ ແມ່ນຮຽນນຳໃຊ້ຕົວສອນນູນໄດ້ຢ່າງງ່າຍດາຍ.



ໃນ ສ.ປ.ປ.ລາວ ມີໂຮງຮຽນສຳລັບເດັກພິການທາງສາຍຕາ ທີ່ໃຫ້ຄູນຳໃຊ້ຕົວອັກສອນນູນເຂົ້າໃນການສິດສອນ.

ກະຊວງສາທາລະນະສຸກ ແລະ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສາມາດຊ່ວຍເຈົ້າ ໃນການຫາໂຮງຮຽນສຳລັບເດັກຕາບອດ.

ໃນການຮຽນອ່ານຕົວອັກສອນນູນເດັກຕ້ອງໄດ້ໃຊ້ນິ້ວມືລູບເມັດນູນທີ່ເຮັດລາຍຄືກັບຕົວອັກສອນເຫຼົ່ານີ້ ປະກອບເຂົ້າກັນໃຫ້ກາຍເປັນຄຳເວົ້າ. ຄືກັນກັບ ຕົວຢ່າງນີ້:




ໃນການຂຽນ ອ່ານຕົວອັກສອນນູນ ເດັກຕ້ອງໄດ້ໃຊ້ອຸປະກອນຕ່າງໆ. ນີ້ແມ່ນປະກອນທຳມະດາທີ່ສຸດ ເຊັ່ນ: ກະດານເຈາະຮູ ແລະ ປາກກາປາກແຫຼມ.





ເດັກທີ່ຂຽນໜັງສືດ້ວຍກະດານເຈາະຮູ ແລະ ປາກກາທີ່ປາກແຫຼມ. ວິທີການຂຽນ ແມ່ນເອົາປາຍປາກກາແທງລົງກະດານທີ່ມີເຈ້ຍຮອງຢ່າງແຮງ. ແລ້ວຈະມີໝາຍຈ້ຳລົງໃສ່ເຈ້ຍ. ຫຼັງຈາກນັ້ນ ລາວກໍ່ສາມາດອ່ານດ້ວຍການໃຊ້ມືສຳຜັດໝາຍຈ້ຳທີ່ນູນຂຶ້ນມາ.

ເດັກຈະສາມາດຮຽນໃຊ້ຕົວອັກສອນນູນໄດ້ງ່າຍຂຶ້ນກວ່າເກົ່າ ຖ້າຫາກເຂົາມີນິ້ວມືທີ່ແຂງແຮງ ແລະ ຈຳໄດ້ດີ. ຂໍ້ມູນເພີ່ມເຕີມ ເບິ່ງໜ້າທີ 98.

## ໂຮງຮຽນມີຄວາມສຳຄັນຕໍ່ກັບເດັກພິດທຸກຄົນ

ໂຮງຮຽນແມ່ນມີຄວາມສຳຄັນຕໍ່ກັບອະນາຄົດຂອງເດັກຕາບອດ, ເພາະວ່າ ເດັກຕາບອດສ່ວນໃຫຍ່ແມ່ນບໍ່ໄດ້ຮັບໂອກາດຄືກັນກັບເດັກທີ່ຕາດີ. ເດັກຕາບອດໄປໂຮງຮຽນ ແລະ ຮຽນສິ່ງຕ່າງໆ ລວມທັງວິຊາຊີບ ເພື່ອໃຫ້ພວກເຂົາສາມາດຫາລ້ຽງຊີບໄດ້.

ໃນ ສ.ປ.ປ.ລາວ ເດັກຕາບອດແມ່ນໄດ້ເຂົ້າໂຮງຮຽນພິເສດສຳລັບຄົນຕາບອດ. ບາງທ້ອງຖິ່ນກໍ່ຍັງບໍ່ທັນມີໂຄງການເພື່ອເດັກຕາບອດເທື່ອ. ການຊ່ວຍເຫຼືອພິເສດເພື່ອຊ່ວຍໃຫ້ເດັກຕາບອດສາມາດເຮັດໄດ້ດີຄືກັນກັບເດັກຕາດີໃນຫ້ອງດຽວກັນ.

